# ຄະນະຊ່ຽວຊານຈາກອງທຶນການເງິນສາກົນ (IMF) ລົງເຮັດວຽກຮ່ວມກັບທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ



**ໃນຕອນເຊົ້າ, ວັນອັງຄານ, ວັນທີ 11 ກໍລະກົດ 2025**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຕ້ອນຮັບ ແລະ ພົບປະຮ່ວມກັບ ຄະນະຊ່ຽວຊານຈາກກອງທຶນການເງິນສາກົນ (International Monetary Fund) ໃນເວລາ 9:00-10:30 ໂມງ ທີ່ຫ້ອງປະຊຸມ ສຳນັກງານໃຫຍ່ ທຄຕລ.



ກອງປະຊຸມພົບປະດັ່ງກ່າວ ຕາງໜ້າ ທຄຕລ ນຳໂດຍ **ທ່ານ ສົມພອນ ຮຸ່ງຍະຈິດ (ວ່າການຫົວໜ້າພະແນກບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດ)** ພ້ອມດ້ວຍຄະນະພະແນກ, ຄະນະຂະແໜງ ແລະ ພະນັກງານວິຊາການ ຈາກພະແນກການທີ່ກ່ຽວຂ້ອງພາຍໃນ ທຄຕລ, ຕາງໜ້າອົງການ IMF ນຳໂດຍ **ທ່ານ ນ. Angana Banerji (Deputy Division Chief, IMF's Asia & Pacific Department)** ພ້ອມດ້ວຍທີມງານ ແລະ ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ (ທຫລ) ເຂົ້າຮ່ວມຕິດຕາມ.

ຈຸດປະສົງໃນການລົງເຮັດວຽກຄັ້ງນີ້ ແມ່ນ ເພື່ອປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ຕາມພັນທະມາດຕາ IV ຂອງອົງການ IMF (IMF Article IV Consultation Mission 2025) ໂດຍໄດ້ສອບຖາມ ແລະ ເກັບກຳຂໍ້ມູນ ທີ່ຕິດພັນກັບຂະແໜງການທະນາຄານ ເວົ້າລວມເວົ້າສະເພາະ ກໍ່ຄືພາບລວມການດຳເນີນງານຂອງ ທຄຕລ ໃນໄລຍະຜ່ານມາ ລວມເຖິງການຈັດຕັ້ງ-ປະຕິບັດນະໂຍບາຍພາກລັດ ເພື່ອເປັນບ່ອນອີງ ແລະ ຂໍ້ມູນພື້ນຖານປະກອບເຂົ້າໃນບົດລາຍງານ ເຊິ່ງໃນການລົງເຮັດວຽກຄັ້ງນີ້ ໄດ້ມີການຫາລືຮ່ວມກັນ ໃນຫຼາຍຫົວຂໍ້ສຳຄັນທີ່ຕິດພັນກັບ ທຄຕລ ເຊັ່ນ: ຜົນການດຳເນີນທຸລະກິດ, ການຂະຫຍາຍຕົວຂອງຍອດສິນເຊື່ອ ແລະ ເງິນຝາກ, ການປ່ຽນແປງນະໂຍບາຍເງິນຕາ ແລະ ລະບຽບການອື່ນສົ່ງຜົນຕໍ່ການດຳເນີນງານຂອງ ທຄຕລ, ພາບລວມການຊື້-ຂາຍເງິນຕາຕ່າງປະເທດ, ຄວາມຄືບໜ້າວຽກງານການເພີ່ມທຶນຂອງ ທຄຕລ, ການບໍລິຫານສະພາບຄ່ອງ ແລະ ການດຳເນີນງານຕາມມາດຕະຖານບັນຊີ IFRS ຕະຫຼອດຮອດ ການບໍລິຫານຊັບສິນ ແລະ ແກ້ໄຂໜີ້ຂອງ ທຄຕລ. ໃນຕອນທ້າຍການພົບປະ, ຊ່ຽວຊານ IMF ໄດ້ສະແດງຄວາມຊົມເຊີຍຕໍ່ຄະນະນຳຂອງ ທຄຕລ ທີ່ໃຫ້ການຮ່ວມມືເຮັດວຽກກັບຄະນະດັ່ງກ່າວ.

**ຂ່າວໂດຍ:** ຂະແໜງພົວພັນນັກລົງທຶນ ແລະ ຮ່ວມມືສາກົນ https://www.bcel.com.la/ Email: bcelhqv@bcel.com.la